# ໃບຄຳຮ້ອງຂໍສະໝັກ ATM ແລະ SMS Banking
## ( ສຳລັບຜູ້ທີ່ມີບັນຊີແລ້ວ )

**ກະລຸນາໝາຍປະເພດບໍລິການທີ່ທ່ານຕ້ອງການນຳໃຊ້**

☐ ATM ☐ SMS Banking

ຊື່ເຈົ້າຂອງບັນຊີ:..............................................................................................................................................

ປະເພດລູກຄ້າ: ☐ ບຸກຄົນ ☐ ນິຕິບຸກຄົນ ☐ ລັດຖະການ ☐ ອື່ນໆ

ທີ່ຢູ່ປະຈຸບັນ: ..................................................................................................................................................

ໂທລະສັບມືຖື..................................... ໂທລະສານ: ............................. Email Address...........................................................

ຂໍ້ມູນບັນຊີເງິນຝາກ: ☐ ບັນຊີເງິນຝາກປະຢັດ ☐ ບັນຊີເງິນຝາກກະແສລາຍວັນ ☐ ບັນຊີເງິນຝາກປະຈຳ ☐ ບັນຊີເງິນກູ້

| ລ/ດ | ເລກບັນຊີ: | ຊື່ບັນຊີ: |
|---|---|---|
| 01. | | |
| 02. | | |
| 03. | | |
| 04. | | |
| 05. | | |

☐ **ສຳລັບຜູ້ນຳໃຊ້ບັດ ATM ຕ້ອງການບັດເສີມ**

▶ **ສຳລັບຜູ້ສະເໜີໃຊ້ບໍລິການ SMS Banking ກະລຸນາປະກອບຂໍ້ມູນເພີ່ມເຕີມ ດັ່ງລຸ່ມນີ້:**

| ສະຖານະເບີໂທໃຊ້ກັບບໍລິການ | ເບີໂທລະສັບໃຊ້ກັບບໍລິການ : |
|---|---|
| ໝາຍເລກທີ 01 | ☐☐☐-☐☐☐☐☐☐☐☐ |
| ໝາຍເລກທີ 02 | ☐☐☐-☐☐☐☐☐☐☐☐ |
| ໝາຍເລກທີ 03 | ☐☐☐-☐☐☐☐☐☐☐☐ |

☐ ເລືອກຮັບຂໍ້ຄວາມແຈ້ງການເຄື່ອນໄຫວຂອງບັນຊີແບບ Auto.

☐ ເລືອກສົ່ງຂໍ້ຄວາມສອບຖາມການເຄື່ອນໄຫວຂອງບັນຊີດ້ວຍຕົນເອງ.

☐ ເລືອກຮັບຂໍ້ຄວາມແຈ້ງອັດຕາແລກປ່ຽນພາຍໃນມື້ແບບ Auto.

ຂ້າພະເຈົ້າຮັບຮອງວ່າ ລາຍລະອຽດຂອງຂໍ້ມູນສ່ວນບຸກຄົນ ແລະຂໍ້ມູນການໃຊ້ບໍລິການທີ່ຂ້າພະເຈົ້າໃຫ້ໄວ້ໃນໃບຄຳຮ້ອງສະບັບນີ້ເປັນຂໍ້ມູນທີ່ຖືກຕ້ອງ ແລະ ເປັນຄວາມຈິງທຸກປະການ ແລະ ຍິນດີປະຕິບັດຕາມເງື່ອນໄຂໃນການໃຊ້ບໍລິການຕາມທີ່ທະນາຄານໄດ້ມອບໃຫ້.

ວັນທີ.............................

| **ລາຍເຊັນຜູ້ອະນຸມັດ ທຄຕລ** | **ລາຍເຊັນພະນັກງານ ທຄຕລ** | **ລາຍເຊັນເຈົ້າຂອງບັນຊີ**<br>**(ຕາມເງື່ອນໄຂ ແບບຟອມລາຍເຊັນ)** |
|---|---|---|

ເອກະສານຕິດຄັດ:

1. ບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືເດີນທາງຂອງຜູ້ທີ່ຈະນຳ ໃຊ້ BCEL SMS Banking / BCEL ATM — ຈຳນວນ 1 ຊຸດ
2. ໃບສະເໜີຈາກກະຊວງ, ກົມກອງ, ອົງການຈັດຕັ້ງສາກົນ, ສະຖານທູດ, ໂຄງການ, ບໍລິສັດ ພ້ອມກາປະທັບ (ນິຕິບຸກຄົນ). — ຈຳນວນ 1 ຊຸດ
3. ສຳເນົາໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດດຳເນີນທຸລະກິດ ຫຼື ໃບອະນຸຍາດດຳເນີນໂຄງການ (ນິຕິບຸກຄົນ). — ຈຳນວນ 1 ຊຸດ
4. ໃບມອບສິດໃຫ້ຜູ້ມາຍື່ນເອກະສານແທນ ກໍລະນີເຈົ້າຂອງບັນຊີບໍ່ໄດ້ມາຍື່ນດ້ວຍຕົວເອງ — ຈຳນວນ 1 ຊຸດ

**ພະນັກງານ BCEL ກວດກາຟອມສະໝັກ :**

1. ໃຊ້ຖືກຟອມແລ້ວບໍ່ ☐ 2. ລະບຸຈຸດປະສົງສະໝັກຄົບແລ້ວ ☐
3. ເບີໂທ, ອີເມວ, ເລກບັນຊີ, ວັນທີໝົດອາຍຸ ເອກະສານຕິດຄັດ ☐
4. ເຊັນພ້ອມຂຽນຊື່ແຈ້ງ ໃສ່ລາຍເຊັນທັງຟອມ ແລະໃບເງື່ອນໄຂ ☐

## ເງື່ອນໄຂ ແລະ ຂໍ້ຜູກພັນໃນການນຳໃຊ້ບໍລິການ BCEL SMS BANKING ຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ສຳລັບລູກຄ້າ)

ຜູ້ໃຊ້ບໍລິການຮັບຮູ້ຂໍ້ຜູກພັນຕາມເງື່ອນໄຂ ແລະ ຂໍ້ກຳນົດຂອງການສະໝັກບໍລິການ BCEL SMS Banking ດັ່ງລຸ່ມນີ້:

1. ບໍລິການ BCEL SMS Banking ເປັນການໃຫ້ບໍລິການຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຜ່ານທາງລະບົບຂໍ້ຄວາມສັ້ນ (SMS) ຂອບເຂດການສົ່ງຂໍ້ຄວາມແມ່ນໃຊ້ໄດ້ພາຍໃນ ສ.ປ.ປ.ລາວ.
2. ຜູ້ສະໝັກໃຊ້ບໍລິການ ຕ້ອງມີບັນຊີນຳທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.
3. ບໍລິການ BCEL SMS Banking ສາມາດໃຫ້ບໍລິການສົ່ງຂໍ້ຄວາມໄດ້ ຫຼາຍກ່ວາ ໜຶ່ງເບີ ຫຼື ໜຶ່ງບັນຊີ ເຊິ່ງສາມາດລົງທະບຽນໄດ້ຕາມຄວາມຕ້ອງການເຊັ່ນ: ສົ່ງຈາກຫຼາຍເບີໂທໃຫ້ໜຶ່ງບັນຊີ, ສົ່ງຈາກຫຼາຍບັນຊີໃຫ້ໜຶ່ງເບີໂທ ຫຼື ສົ່ງຈາກຫຼາຍບັນຊີໃຫ້ຫຼາຍເບີໂທ.
4. ຜູ້ສະໝັກໃຊ້ບໍລິການ ຕ້ອງລະບຸຂໍ້ມູນໃຫ້ຖືກຕ້ອງຊັດເຈນລົງໃນຟອມສະໝັກເຊັ່ນ: ຈຳນວນເລກໂທລະສັບທີ່ຈະສົ່ງ ແລະ ຈຳນວນບັນຊີ ໂດຍອັດຕາຄ່າທຳນຽມຈະເກັບຕາມ ເບີໂທຕໍ່ບັນຊີຕໍ່ເດືອນ ນັ້ນໝາຍຄວາມວ່າ: ສົ່ງຫຼາຍເບີໂທ ຫຼື ຫຼາຍບັນຊີ ການເກັບຄ່າທຳນຽມຈະເກັບ ເພີ່ມຕາມຈຳນວນເບີໂທ ຫຼື ຈຳນວນບັນຊີ ທີ່ໄດ້ລະບຸໄວ້.
5. ຜູ້ສະໝັກຮັບປະກັນວ່າ ຕົນເອງຖືກອະນຸຍາດ ຫຼື ໄດ້ຮັບສິດ ຈາກເຈົ້າຂອງບັນຊີ ໃນການນຳບັນຊີດັ່ງກ່າວມາລົງທະບຽນເພື່ອຮັບບໍລິການ BCEL SMS Banking ຈາກທະນາຄານ ແລະ ຈະຮັກສາຄວາມລັບທາງການເງິນໃນຂໍ້ຄວາມໄວ້ເປັນຄວາມລັບຂອງຜູ້ນຳໃຊ້.
6. ເມື່ອການສະໝັກໃຊ້ບໍລິການສຳເລັດ ລະບົບຈະສົ່ງຂໍ້ຄວາມຢືນຢັນການລົງທະບຽນ ໄປຫາໝາຍເລກໂທລະສັບຂອງລູກຄ້າທີ່ໄດ້ລົງທະບຽນໄວ້.
7. ກໍລະນີຕ້ອງການ ປ່ຽນແປງ, ຍົກເລີກບໍລິການ ຫຼື ນຳໃຊ້ຄືນໃໝ່ ລູກຄ້າຕ້ອງປະກອບເອກະສານໃສ່ຟອມປ່ຽນແປງການນຳໃຊ້ບໍລິການ BCEL SMS Banking ທີ່ທະນາຄານວາງອອກເທົ່ານັ້ນ ແລະ ສາມາດເຂົ້າມາຍື່ນຟອມໄດ້ທີ່ບັນດາສາຂາ ຫຼື ໜ່ວຍບໍລິການຂອງ ທຄຕລ ໃກ້ບ້ານທ່ານ.
8. ກໍລະນີລູກຄ້າລົງທະບຽນໄປແລ້ວ ບໍ່ໄດ້ຮັບຂໍ້ຄວາມຕອບຮັບ, ບໍ່ໄດ້ຮັບຂໍ້ຄວາມການເຄື່ອນໄຫວບັນຊີ, ປ່ຽນແປງເບີໂທ ຫຼື ປ່ຽນເຄື່ອງໂທລະສັບແລ້ວບໍ່ໄດ້ຮັບຂໍ້ຄວາມ ໃຫ້ລູກຄ້າພົວພັນຫາທະນາຄານດ່ວນ ຖ້າບໍ່ດັ່ງນັ້ນ, ທາງທະນາຄານຈະບໍ່ຮັບຜິດຊອບຕໍ່ຂໍ້ມູນທີ່ສົ່ງອອກໄປຫາໝາຍເລກໂທລະສັບທີ່ມີບັນຫາດັ່ງກ່າວ ແລະ ຜູ້ສະໝັກໃຊ້ບໍລິການ ຕ້ອງຍອມຮັບໃນການຊຳລະຄ່າທຳນຽມ ເໝືອນກັບການນຳໃຊ້ປົກກະຕິ.
9. ຫຼັງຈາກການສະໝັກສຳເລັດແລ້ວ, ຜູ້ສະໝັກນຳໃຊ້ ຈະໄດ້ຮັບບໍລິການຕ່າງໆ ຜ່ານລະບົບ SMS ດັ່ງນີ້:

   \+ ບໍລິການແຈ້ງຂໍ້ມູນທາງການເງິນ:

   ເມື່ອບັນຊີຂອງທ່ານມີການເຄື່ອນໄຫວບັນຊີເຊັ່ນ: ເງິນເຂົ້າ, ເງິນອອກ, ດອກເບ້ຍຕ່າງໆ, ການຖອນເງິນສົດ, ການໂອນເງິນ ຫຼື ການຊຳລະສະສາງຕ່າງໆ ຜ່ານຊ່ອງທາງຕ່າງໆ ທາງທະນາຄານຈະສົ່ງຂໍ້ມູນການເຄື່ອນໄຫວບັນຊີດັ່ງກ່າວ ພ້ອມກັບຍອດເຫຼືອໃນບັນຊີ ໃຫ້ກັບ ເຈົ້າຂອງບັນຊີຜ່ານຂໍ້ຄວາມສັ້ນ ເຂົ້າເບີໂທລະສັບມືຖືທີ່ທ່ານໄດ້ ລົງທະບຽນເບີໂທລະສັບກັບທະນາຄານ.

   \+ ບໍລິການສອບຖາມຂໍ້ມູນທາງການເງິນ ໂດຍຜູ້ໃຊ້ບໍລິການ ຈະສົ່ງລະຫັດຜ່ານລະບົບ SMS ຕາມລະຫັດທີ່ທາງທະນາຄານໄດ້ ກຳນົດໄວ້ແລ້ວສົ່ງໄປເບີ 1444 ຫຼັງຈາກນັ້ນ, ທາງລະບົບຂອງທະນາຄານຈະຕອບກັບຫາຜູ້ໃຊ້ ພ້ອມຂໍ້ມູນທີ່ຕ້ອງການ ປະກອບມີ: ຍອດເງິນລ່າສຸດຂອງບັນຊີຜູ້ໃຊ້, ທ້າລາຍການເຄື່ອນໄຫວລ່າສຸດຂອງບັນຊີຜູ້ໃຊ້ ແລະ ອັດຕາແລກປ່ຽນປະຈຳວັນ + ບໍລິການສົ່ງອັດຕາແລກປ່ຽນປະຈຳວັນແບບອັດຕະໂນມັດ ໂດຍລະບົບຈະສົ່ງຜ່ານລະບົບ SMS ເປັນປະຈຳໃນທຸກໆເຊົ້າ ຂອງວັນລັດຖະການ.
10. ຜູ້ໃຊ້ຍອມຮັບ ແລະ ຍິນຍອມ ຕໍ່ການປ່ຽນແປງຂໍ້ກຳນົດ ແລະ ເງື່ອນໄຂຕ່າງໆ ໂດຍທະນາຄານຈະແຈ້ງໃຫ້ຮູ້ລ່ວງໜ້າ ຫຼື ປະກາດຢູ່ເວັບໄຊຂອງທະນາຄານ.
11. ທະນາຄານຈະບໍ່ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ ເນື່ອງຈາກຄວາມຂັດຂ້ອງທີ່ເກີດຂຶ້ນຈາກລະບົບຕິດຕໍ່ສື່ສານ, ອຸປະກອນສື່ສານຂອງຜູ້ໃຊ້ບໍລິການ, ໂປຼແກມຮັບສົ່ງຂໍ້ຄວາມ ຂອງຜູ້ໃຊ້ບໍລິການ ຫຼື ຂອງຜູ້ໃຫ້ບໍລິການເຄືອຂ່າຍໂທລະສັບ; ລະບົບໄຟຟ້າ; ຫຼື ການປິດລະບົບຊົ່ວຄາວເພື່ອບຳລຸງຮັກສາ ອັນເປັນເຫດ ໃຫ້ຜູ້ໃຊ້ບໍລິການຊັກຊ້າ ຫຼື ບໍ່ສາມາດໃຊ້ໄດ້.
12. ຜູ້ໃຊ້ບໍລິການຍິນຍອມທີ່ຈະຈ່າຍຄ່າທຳນຽມ ແລະ ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງ ໂດຍອະນຸຍາດທະນາຄານຫັກຈາກບັນຊີຫຼັກ ຫຼື ບັນຊີທີ່ໄດ້ລະບຸໄວ້ໃນການສະໝັກ ທີ່ມີຢູ່ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໂດຍທັນທີ. ຫາກມີການປ່ຽນແປງອັດຕາຄ່າທຳນຽມ, ຜູ້ໃຊ້ຕົກ

ລົງຍອມຮັບໃນການປ່ຽນແປງຄ່າທຳນຽມໂດຍບໍ່ມີຂໍ້ຂັດແຍ່ງ.

13. ໃນກໍລະນີທີ່ບໍ່ສາມາດຫັກຄ່າທຳນຽມຈາກບັນຊີຂອງຜູ້ໃຊ້ໄດ້, ທະນາຄານຈະຢຸດການໃຫ້ບໍລິການເປັນການຊົ່ວຄາວ ໃນທັນທີ.
14. ຜູ້ໃຊ້ບໍລິການຮັບຊາບວ່າ ສຳລັບການສົ່ງຂໍ້ຄວາມສອບຖາມ ເຂົ້າມາຫາລະບົບທະນາຄານແມ່ນຖືກສ້າງຂຶ້ນເພື່ອອຳນວຍຄວາມສະດວກໃຫ້ແກ່ລູກຄ້າຜູ້ນຳໃຊ້ບໍລິການ ເຊິ່ງຄ່າໃຊ້ຈ່າຍຂໍ້ຄວາມສະບັບດັ່ງກ່າວ ແມ່ນຜູ້ໃຊ້ບໍລິການແມ່ນຕ້ອງໄດ້ຮັບຜິດຊອບຄ່າໃຊ້ຈ່າຍຂໍ້ຄວາມດັ່ງກ່າວເອງກັບຜູ້ໃຫ້ບໍລິການເຄືອຂ່າຍໂທລະສັບ , ບໍ່ຂຶ້ນກັບທະນາຄານ .
15. ຜູ້ໃຊ້ບໍລິການຮັບຮູ້ວ່າ ການໃຫ້ບໍລິການຈະໄດ້ຜ່ານຂະບວນການ ທີ່ຈຳເປັນເພື່ອໃຫ້ບໍລິການ ເຊິ່ງທາງທະນາຄານ ຈະບໍ່ຮັບຜິດຊອບຕໍ່ຄວາມເສຍຫາຍໃດໆ ທີ່ເກີດຂຶ້ນຍ້ອນຄວາມລ່າຊ້າຂອງລະບົບ.
16. ໃນກໍລະນີພົບເຫັນຂໍ້ຜິດພາດ ຫຼື ຂໍ້ສົງໃສໃດໆ ໃນການໃຊ້ບໍລິການ, ຜູ້ໃຊ້ບໍລິການຕ້ອງຮີບດ່ວນແຈ້ງທະນາຄານ ພ້ອມຂໍ້ມູນທີ່ຈຳເປັນ ເຊັ່ນ: ວັນ ແລະ ເວລາທີ່ສົ່ງຂໍ້ຄວາມ, ຊື່ລູກຄ້າ, ໝາຍເລກໂທລະສັບທີ່ໃຊ້ລົງທະບຽນ, ເລກບັນຊີ ແລະ ຄວາມຜິດພາດທີ່ເກີດຂຶ້ນ.

**ວັນທີ..........................................**

**ລາຍເຊັນພະນັກງານ ທຄຕລ** **ລາຍເຊັນເຈົ້າຂອງບັນຊີ**

**ຊື່ແຈ້ງ............................................**

# ລາຍການ ອັດຕາ ຄ່າບໍລິການ ຜະລິດຕະພັນ E-Banking
## ຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

| ລາຍການຄ່າບໍລິການ | | ອັດຕາຄ່າບໍລິການ |
|---|---|---|
| BCEL SMS BANKING | ➢ ສະໝັກລົງທະບຽນນຳໃຊ້ | ບໍ່ເກັບ |
| | ➢ ຄ່າທຳນຽມລາຍເດືອນ | 10,000 ກີບ/ເບີໂທ/ບັນຊີ/ເດືອນ |
| Exchange Alert | ➢ ສົ່ງອັດຕາແລກປ່ຽນປະຈຳວັນ | 5,000 ກີບ/ເບີໂທລະສັບ/ເດືອນ |

ວັນທີ ..........................................

<u>ພະນັກງານ ທຄຕລ</u> <u>ລາຍເຊັນເຈົ້າຂອງບັນຊີ</u>

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----===000===----

ຊື່ບໍລິສັດ...................................

ເບີໂທລະສັບ..............................

# ໃບມອບສິດ

ຂ້າພະເຈົ້າເປັນເຈົ້າຂອງບັນຊີ ຊື່ ທ່ານ..................................................................................ອາຍຸ...............ປີ, ໜ້າທີ່ຮັບຜິດຊອບ: ........................................................................................................................ ໄດ້ມອບສິດໃຫ້ແກ່: ທ້າວ/ນາງ ....................................................................................ອາຍຸ..............ປີ, ສັນຊາດ.....................ຖືບັດປະຈຳຕົວ / ໜັງສືຜ່ານແດນ ເລກທີ............................................................... ຕຳແໜ່ງ.................................................................................................................................. ປະຈຸບັນຢູ່ບ້ານ ...............................ໜ່ວຍ...............ເມືອງ....................ແຂວງ........................................ ເພື່ອໃຫ້ຜູ້ກ່ຽວມາພົວພັນປະກອບເອກະສານແບບຟອມ ສະໝັກ / ປ່ຽນແປງ BCEL SMS Banking ຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

ຂ້າພະເຈົ້າ ຂໍຢັ້ງຢືນວ່າ ຜູ້ກ່ຽວເປັນ...................................................ຂອງພວກຂ້າພະເຈົ້າແທ້ ແລະ ຂໍ້ມູນຕ່າງໆທີ່ຢູ່ໃນເອກະສານແບບຟອມສະໝັກ / ປ່ຽນແປງ ທີ່ໄດ້ຮັບຈາກ ຜູ້ກ່ຽວນັ້ນ ເປັນຄວາມຮັບຜິດຊອບພາຍໃນຂອງພວກຂ້າພະເຈົ້າເອງທຸກປະການ.

ດັ່ງນັ້ນ, ຈິ່ງໄດ້ເຮັດໃບມອບສິດໃຫ້ຜູ້ກ່ຽວໄວ້ເພື່ອເປັນຫຼັກຖານໃນການພົວພັນກັບພາກສ່ວນກ່ຽວຂ້ອງ ຂອງທະນາຄານ ຈິ່ງອຳນວຍຄວາມສະດວກໃຫ້ຜູ້ກ່ຽວດ້ວຍ.

..................................., ວັນທີ......................................

**ຜູ້ຮັບສິດ** | **ຜູ້ມອບສິດ**

**(ເຊັນ ແລະ ປະທັບຕາ)**

ຊື່ແຈ້ງ.............................................